ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

******************

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ວັນທີ 18/03/2016

# ມະຕິ
# ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ
# ຄັ້ງວັນທີ 18/03/2016

ກອງປະຊຸມສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສະໄໝສາມັນ ໄດ້ເປີດຂຶ້ນໃນເວລາ 13:30 ໂມງ ຂອງວັນທີ 18/03/2016 ທີ່ສຳນັກງານໃຫຍ່ ທຄຕລ ໂດຍການເປັນປະທານກອງປະຊຸມຂອງທ່ານ ດຣ. ບຸນເຫຼືອ ສິນໄຊວໍຣະວົງ, ຫົວໜ້າກົມງົບປະມານກະຊວງການເງິນ, ປະທານສະພາບໍລິຫານ ທຄຕລ, ມີສະມາຊິກສະພາບໍລິຫານ ແລະ ຜູ້ສັງເກດການເຂົ້າຮ່ວມຕາມລາຍຊື່ຊ້ອນທ້າຍ.

**ກອງປະຊຸມໄດ້ປຶກສາຫາລືບັນຫາຕ່າງໆພ້ອມທັງໄດ້ມີມະຕິຕົກລົງ ດັ່ງນີ້:**

1. ກອງປະຊຸມເຫັນດີເປັນເອກະພາບຮັບຮອງການແບ່ງປັນກຳໄລປີ 2015 ເຂົ້າຄັງຕ່າງໆ ແລະ ເຫັນດີຮັບຮອງເງິນປັນຜົນຮຸ້ນ ທຄຕລ ປະຈຳງວດ 2 ປີ 2015 ເພື່ອນຳສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາຮັບຮອງເອົາໃນລຳດັບຕໍ່ໄປ.
2. ກອງປະຊຸມເຫັນດີຮັບຮອງແຜນການປະຈຳປີ 2016, ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈຳປີ 2015.
3. ກອງປະຊຸມເຫັນດີເປັນເອກະພາບໃນການປັບປຸງລະບຽບການຮັບພະນັກງານ ທຄຕລ.
4. ກອງປະຊຸມເຫັນດີຮັບຮອງເອົາເນື້ອໃນວາລະກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈຳປີ 2015.
5. ກອງປະຊຸມເຫັນດີຮັບຮອງທິດທາງການວ່າຈ້າງທີ່ປຶກສາໃນການບໍລິຫານງານ ທຄຕລ ໃນປີ 2016.

ກອງປະຊຸມໄດ້ປິດລົງໃນເວລາ 16:30 ໂມງ ຂອງວັນດຽວກັນ.

ປະທານສະພາບໍລິຫານ ທຄຕລ

ດຣ. ບຸນເຫຼືອ ສິນໄຊວໍຣະວົງ